Australian Aid

**ALUMNI INNOVATION GRANTS**

**ທຶນຊ່ວຍເຫຼືອຂະໜາດນ້ອຍສຳລັບອະດີດນັກສຶກສາລາວ-ອົດສະຕຣາລີ**

ໂຄງການ:

## " ປູກຈິດສຳນຶກກ່ຽວກັບວຽກງານ ການພັດທະນາ ແບບມີສ່ວນຮ່ວມຂອງຄົນທີ່ມີຄວາມພິການ "

ເມືອງ ເລົ່າງາມ, ແຂວງ ສາລະວັນ, ປະເທດລາວ

AIG 5












### ທ່ານນາງ ໃຈເພັດ ພັນທະເກສອນ

ຮອງຫົວໜ້າ

ສູນການແພດຟື້ນຟູໜ້າທີ່ການ ແຂວງຈຳປາສັກ

ດ້ວຍປະລິນຍາໂທ ສາຂານະໂຍບາຍພັດທະນາຄົນພິການ ທີ່ມະຫາວິທະຍາໄລ Flinders University

ທ່ານ ນາງ ໃຈເພັດ ພັນທະເກສອນ ເປັນຮອງຫົວໜ້າ ສູນການແພດຟື້ນຟູໜ້າທີ່ການ ແຂວງຈຳປາສັກ ແລະ ເປັນຜູ້ສະໜັບສະໜຸນ ແລະ ສົ່ງເສີມສິດທິຂອງຄົນພິການຢ່າງບໍ່ຢຸດຢ່ອນ.

ໃນປັດຈຸບັນນີ້, ດ້ວຍທຶນສະໜັບສະໜູນ ຈາກລັດຖະບານອົດສະຕຣາລີ ພາຍໃຕ້ໂຄງການ ທຶນຊ່ວຍເຫຼືອຂະໜາດນ້ອຍສຳລັບອະດີດນັກສຶກສາລາວ-ອົດສະຕຣາລີ, ທ່ານ ນາງ ໃຈເພັດ ໄດ້ນຳໃຊ້ປະສົບການໃນການເຮັດວຽກຊ່ວຍ ເຫຼືອຄົນພິການ ເພື່ອປູກຈິດສຳນຶກກ່ຽວກັບ ວຽກງານການພັດທະນາແບບມີສ່ວນຮ່ວມຂອງຄົນທີ່ມີຄວາມພິການຢູ່ແຂວງສາລະວັນ.

ທ່ານ ນາງ ໃຈເພັດ ໄດ້ສົມທົບກັບກຸ່ມຄົນໃນແຂວງສາລະວັນ ເພື່ອເພີ່ມທະວີຄວາມຮູ້ ແລະ ຄວາມເຂົ້າໃຈກ່ຽວກັບວຽກງານຄົນພິການ ແລະ ການພັດທະນາແບບມີສ່ວນຮ່ວມ ໂດຍຜ່ານການຝຶກອົບຮົມໃນຫົວຂໍ້ປະເພດຂອງຄວາມພິການ ແລະ ການບໍລິການ ສຳລັບຄົນພິການໃຫ້ແກ່ນັກວິຊາການຈາກຂະແໜງສາທາລະນະສຸກ, ສຶກສາ ແລະ ກິລາ ແລະ ອຳນາດການປົກ ຄອງທ້ອງຖິ່ນຈຳນວນ 32 ທ່ານ, ພ້ອມນັ້ນກໍ່ຍັງໄດ້ລົງເຮັດວຽກຢູ່ທ້ອງຖິ່ນ ເພື່ອໃຫ້ບໍລິການແກ່ກຸ່ມຄົນໃນ ທ້ອງຖິ່ນທັງຄົນພິການທາງດ້ານຮ່າງກາຍ ແລະ ຜູ້ເບິ່ງແຍງຈຳນວນ 210 ທ່ານທີ່ມາເຂົ້າຮ່ວມຮັບການປະເມີນ, ຄວາມຮູ້ດ້ານສຸຂະພາບ, ຄຳປຶກສາ, ແລະ ຄຳແນະນຳທີ່ຈຳເປັນຕ່າງໆ, ໃນນັ້ນ 150 ທ່ານ ທີ່ມາເຂົ້າຮ່ວມຮັບການປະເມີນກວດພົບວ່າ ມີຄວາມພິການທາງດ້ານຮ່າງກາຍ ແລະ ໄດ້ຮັບການຊີ້ນຳທີ່ຈຳເປັນເພີ່ມຕື່ມ.

ນອກຈາກນັ້ນ, ທ່ານ ນາງ ໃຈເພັດ ຍັງໄດ້ຊ່ວຍໃຫ້ປະຊາຊົນຜູ້ດ້ອຍໂອກາດ ແລະ ຄົນພິການ ສາມາດເຂົ້າເຖິງການບໍລິການສາທາລະນະໄດ້ຫຼາຍຂຶ້ນ ໂດຍຜ່ານການ ແຕ່ງຕັ້ງຜູ້ປະສານງານຈຳນວນ 3 ທ່ານ ໃຫ້ເປັນຜູ້ຕິດຕາມ ແລະ ຊ່ວຍໃຫ້ຄຳແນະນຳເພື່ອສົ່ງຕໍ່ຄົນເຈັບໃຫ້ກັບສູນການແພດຟື້ນຟູໜ້າທີ່ການ.

ຂໍສະແດງຄວາມຍິນດີກັບ ທ່ານ ນາງ ໃຈເພັດ ທີ່ໄດ້ຈັດຕັ້ງປະຕິບັດໂຄງການທີ່ດີຫຼາຍພາຍໃຕ້ທຶນຊ່ວຍເຫຼືອຂະໜາດນ້ອຍສຳລັບອະດີດນັກສຶກສາ ລາວ-ອົດສະຕຣາລີ!

Australian Aid

ALUMNI INNOVATION GRANTS

ທຶນຊ່ວຍເຫຼືອຂະໜາດນ້ອຍສໍາລັບອະດີດນັກສຶກສາລາວ-ອົດສະຕຣາລີ

โຄງການ:

# “ ສົ່ງເສີມການປົກປັກຮັກສາແນວພັນພືດພື້ນເມືອງ ”

ເມືອງ ນໍ້າບາກ ແລະ ເມືອງ ງອຍ, ແຂວງ ຫຼວງພະບາງ, ປະເທດລາວ

AIG 5











## ທ່ານ ແພງ ຊາໂພຄໍາ

**ພະນັກງານສົ່ງເສີມກະສິກໍາ**

ຫ້ອງການກະສິກໍາ ແລະ ປ່າໄມ້ ແຂວງຫຼວງພະບາງ.

ໃນປັດຈຸບັນນີ້, ດ້ວຍທຶນສະໜັບສະໜູນ ຈາກລັດຖະບານອົດສະຕຣາລີ ພາຍໃຕ້ໂຄງການ ທຶນຊ່ວຍເຫຼືອຂະໜາດນ້ອຍສໍາລັບອະດີດນັກສຶກສາລາວ-ອົດສະຕຣາລີ, ທ່ານ ແພງ ໄດ້ນໍາໃຊ້ຄວາມຮູ້ຈາກການໄປຮຽນຊັ້ນສູງ ສາຂາວິຊາ ກະສິກໍາແບບຍືນຍົງ ເພື່ອຊ່ວຍຊາວກະສິກອນຢູ່ເມືອງນໍ້າບາກ ແລະ ເມືອງງອຍ ແຂວງຫຼວງພະບາງ ເພື່ອກະກຽມສໍາລັບອະນາຄົດ.

ໃນໄລຍະ 6 ເດືອນທີ່ຜ່ານມາ, ທ່ານ ແພງ ໄດ້ຮ່ວມມືກັບຊາວກະສິກອນທ້ອງຖິ່ນເພື່ອປົກປັກຮັກສາແນວພັນພືດພື້ນເມືອງ ພ້ອມທັງການໃຫ້ຄວາມຮູ້ກ່ຽວກັບ ລະບົບຄວາມຢືດຢຸ່ນຂອງອາຫານແບບທັນສະໄໝ. ໝາກຜົນຂອງໂຄງການຂອງທ່ານ ແພງ ສະແດງໃຫ້ເຫັນເຖິງການເກັບກໍາ ແລະ ຮັກສາແນວພັນພືດຜັກຊະນິດຕ່າງໆກວ່າ 67 ແນວພັນຂອງທ້ອງຖິ່ນ ໂດຍຜ່ານການປະກອບສ່ວນຂອງຊາວກະສິກອນ 42 ຄົນ, ແລະ ການຝຶກອົບຮົມໃຫ້ແກ່ຊາວກະສິກອນຈໍານວນ 23 ຄົນກ່ຽວກັບລະບົບນິເວດພື້ນຖານຂອງການເຮັດກະສິກໍາ, ພ້ອມດ້ວຍ ການຈັດທັດສະນະສຶກສາເປັນເວລາ 1 ວັນໃຫ້ແກ່ນ້ອງໆນັກຮຽນຈໍານວນ 47 ຄົນ, ຄູສອນ 8 ຄົນ, ແລະ ຊາວກະສິກອນທົ່ວໄປ 13 ຄົນ.

ນອກຈາກນັ້ນແລ້ວ ທ່ານ ແພງ ຍັງໄດ້ນໍາໃຊ້ທຶນທີ່ເພິ່ນໄດ້ຮັບໃນການຕິດຕັ້ງຖັງນໍ້າ ແລະ ລະບົບຫົດນໍ້າ, ສ້າງສວນກ້າເບ້ຍ, ຟາມດ້ວງ, ໝານຜັກຖາວອນ ແລະ ສະໜອງອຸປະກອນເກັບແກ່ນພັນໃຫ້ຊາວກະສິກອນທ້ອງຖິ່ນ.

ເປັນໂຄງການທີ່ດີຫຼາຍ! ຂໍສະແດງຄວາມຍິນດີກັບ ທ່ານ ແພງ ທີ່ໄດ້ແບ່ງປັນທັກສະ, ຄວາມຮູ້ ແລະ ຄວາມມັກຮັກໃນການປູກຝັງແບບຍືນຍົງໃຫ້ກັບຊຸມຊົນທ້ອງຖິ່ນ!

Australian Aid

# ALUMNI INNOVATION GRANTS

ທຶນຊ່ວຍເຫຼືອຂະໜາດນ້ອຍສໍາລັບອະດີດນັກສຶກສາລາວ-ອົດສະຕຣາລີ

ໂຄງການ:

## “ ເພື່ອຍົກລະດັບຄວາມຮູ້ໃຫ້ແກ່ສື່ມວນຊົນລາວ ໃນການຜະລິດຂ່າວ ເພື່ອກະກຽມການລາຍງານ ກ່ຽວກັບກອງປະຊຸມສຸດຍອດອາຊຽນ ທີ່ ສປປ ລາວ ”

ບ້ານ ຈອມມະນີ, ເມືອງ ໄຊທານີ, ນະຄອນຫຼວງວຽງຈັນ, ປະເທດລາວ

AIG 5









**ທ່ານ ນາງ ວຽງລາຕີ ເກດສັດຖາ**

**ນັກຂ່າວ**

ໂທລະພາບແຫ່ງຊາດລາວ.



ທ່ານ ນາງ ວຽງລາຕີ ເກດສັດຖາ ເປັນນັກຂ່າວຜູ້ທີ່ມີປະສົບການສູງ ຢູ່ໂທລະພາບແຫ່ງຊາດລາວ.

ທ່ານ ນາງ ວຽງລາຕີ ຈົບປະລິນຍາໂທ ສາຂາສື່ສານມວນຊົນໃນປີ 2010 ດ້ວຍທຶນການສຶກສາອົດສະຕຣາລີ ແລະ ໄດ້ນໍາໃຊ້ທຶນສະໜັບສະໜູນຂະໜາດນ້ອຍສໍາລັບອະດີດນັກສຶກສາລາວ-ອົດສະຕຣາລີ #AlumniInnovationGrant ເພື່ອຍົກລະດັບຄວາມຮູ້ໃຫ້ແກ່ສື່ມວນຊົນລາວໃນການຜະລິດຂ່າວ ເພື່ອກະກຽມການລາຍງານ ກ່ຽວກັບກອງປະຊຸມສຸດຍອດອາຊຽນ ທີ່ ສປປ ລາວ ກຽມເປັນເຈົ້າພາບໃນປີນີ້.

ທ່ານ ນາງ ວຽງລາຕີ ໄດ້ຈັດຕັ້ງປະຕິບັດໂຄງການຝຶກອົບຮົມຂຶ້ນຢູ່ທີ່ ນະຄອນຫຼວງວຽງຈັນ ເພື່ອຍົກລະດັບຄວາມສາມາດ ແລະ ທັກສະດ້ານວິຊາການຂອງພະນັກງານສື່ມວນຊົນລາວ ໃນທຸກຂົງເຂດ ເຊັ່ນ: ໂທລະພາບ, ວິທະຍຸ ແລະ ໜັງສືພິມ. ການຝຶກອົບຮົມ ໄດ້ກວມເອົາການນໍາໃຊ້ເຕັກໂນໂລຊີແບບໃໝ່ ໃນການຜະລິດຂ່າວ, ເພີ່ມຄວາມຮູ້ ແລະ ຄວາມເຂົ້າໃຈກ່ຽວກັບບັນຫາທີ່ກ່ຽວຂ້ອງ ກັບກອງປະຊຸມອາຊຽນ.

ໃນເດືອນພະຈິກ 2023, ກຸ່ມນັກຂ່າວລາວຈໍານວນ 34 ທ່ານ ໄດ້ເຂົ້າຮ່ວມການຝຶກອົບຮົມ ເພື່ອຍົກລະດັບການລາຍງານ ແລະ ການຜະລິດຂ່າວ ໂດຍສະເພາະປະເດັນທີ່ກ່ຽວຂ້ອງກັບອາຊຽນ. ໃນການຝຶກຫັດຕົວຈິງ, ນັກສໍາມະນາກອນທັງໝົດໄດ້ຜະລິດຂ່າວທີ່ກ່ຽວຂ້ອງກັບອາຊຽນ ແລະ ບົດຂ່າວດັ່ງກ່າວໄດ້ຖືກເຜີຍແຜ່ທາງສື່ສັງຄົມອອນໄລ ແລະ ອອກອາກາດທາງໂທລະພາບແຫ່ງຊາດລາວ.

ຂໍສະແດງຄວາມຍິນດີ ແລະ ຊົມເຊີຍ ທ່ານນາງ ວຽງລາຕີ!! ທ່ານໄດ້ຈັດການຝຶກອົບຮົມທີ່ເໝາະສົມ ແລະ ຕອບສະໜອງ ຕໍ່ຄວາມຕ້ອງການປັດຈຸບັນຂອງສື່ມວນຊົນລາວ ເຊິ່ງເປັນການສະໜັບສະໜູນ ສປປ ລາວ ໃຫ້ທຽບເທົ່າສາກົນໃນໄລຍະປະຊຸມອາຊຽນ #ASEAN2024

Australian Aid

# ALUMNI INNOVATION GRANTS

ທຶນຊ່ວຍເຫຼືອຂະໜາດນ້ອຍສໍາລັບອະດີດນັກສຶກສາລາວ-ອົດສະຕຣາລີ

ໂຄງການ:

## " ການສະໜອງນ້ຳສະອາດ ແລະ ປູກຈິດສຳນຶກ ໃຫ້ນັກຮຽນ "

ໂຮງຮຽນ ມ.ສ ຫີນເຫີບ, ແຂວງ ວຽງຈັນ, ປະເທດ ລາວ

AIG 5









## ທ່ານ ພິ້ງສະຫຼຽວ ສີທ່ຽງທຳ

**ວິຊາການຂອງກົມຊັບພະຍາກອນນ້ຳ**

ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ



ທ່ານ ພິ້ງສະຫຼຽວ ສີທ່ຽງທຳ ຈົບປະລິນຍາໂທສາຂາວິທະຍາສາດ ການຄຸ້ມຄອງຊັບພະຍາກອນນ້ຳ ຈາກ Flinders University ໃນປີ 2019 ດ້ວຍທຶນການສຶກສາອົດສະຕຣາລີ #AustraliaAwards. ປັດຈຸບັນ, ທ່ານ ພິ້ງສະຫຼຽວ ເປັນພະນັກງານວິຊາການຂອງກົມ ຊັບພະຍາກອນນ້ຳ, ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ.

ດ້ວຍຄວາມຮູ້ກ່ຽວກັບການຄຸ້ມຄອງນ້ຳ, ທ່ານ ພິ້ງສະຫຼຽວ ໄດ້ສັງເກດເຫັນວ່າປະຊາຊົນສ່ວນຫຼາຍຂອງ ເມືອງຫີນເຫີບ ແຂວງວຽງຈັນ ແມ່ນອາໄສດື່ມນ້ຳ ທີ່ມາຈາກນ້ຳໃຕ້ດິນ, ເຊິ່ງ ນ້ຳໃຕ້ດິນອາດປົນເປື້ອນ ດ້ວຍມົນລະພິດທີ່ເປັນອັນຕະລາຍ ເຮັດໃຫ້ເກີດຄວາມສ່ຽງຕໍ່ສຸຂະພາບທີ່ຮ້າຍແຮງ ໂດຍສະເພາະກັບ ເດັກນ້ອຍ.

ດ້ວຍທຶນຊ່ວຍເຫຼືອຂະໜາດນ້ອຍສໍາລັບອະດີດນັກສຶກສາລາວ-ອົດສະຕຣາລີ #AlumniInnovationGrant, ທ່ານ ພິ້ງສະຫຼຽວ ໄດ້ຕິດຕັ້ງເຄື່ອງກອງນ້ຳສະອາດ ແລະ ຈັກສູບນ້ຳ ທີ່ໃຊ້ພະລັງງານແສງອາທິດກັບຖັງນ້ຳ ພ້ອມດ້ວຍການຝຶກອົບຮົມກ່ຽວກັບການຕິດຕາມກວດກາ ຄຸນນະພາບນ້ຳໃຫ້ແກ່ ໂຮງຮຽນ ມ.ສ ຫີນເຫີບ. ໂຄງການນີ້ ໄດ້ເຮັດໃຫ້ນັກຮຽນຈຳນວນ 787 ຄົນ ແລະ ຄູສອນ 45 ທ່ານ ເຂົ້າເຖິງນ້ຳດື່ມທີ່ສະອາດ, ພ້ອມດຽວກັນນັ້ນ ກໍເປັນການຫຼຸດຜ່ອນການໃຊ້ ພະລັງງານ ແລະ ຂີ້ເຫຍື້ອປລາສຕິກ.

ນອກຈາກນັ້ນ, ທ່ານ ພິ້ງສະຫຼຽວ ຍັງໄດ້ສົ່ງມອບຄວາມຮູ້ກ່ຽວກັບການອະນຸລັກນ້ຳໃຫ້ແກ່ຄູ-ອາຈານ ແລະ ນັກຮຽນ ລວມທັງ ສົ່ງເສີມໃຫ້ເຂົາເຈົ້າເປັນເຈົ້າການໃນການດູແລຮັກສາແຫຼ່ງນ້ຳ. ປັດຈຸບັນ, ນັກຮຽນສາມາດຕິດຕາມ ແລະ ລາຍງານຄຸນນະພາບຂອງນ້ຳໃຕ້ດິນໃຫ້ທາງໂຮງຮຽນຢ່າງສະໝ່ຳສະເໝີ.

ຂໍສະແດງຄວາມຊົມເຊີຍຕໍ່ ທ່ານ ພິ້ງສະຫຼຽວ! ໂຄງການນີ້ເປັນແບບຢ່າງໃຫ້ຊຸມຊົນອື່ນໆໄດ້ນຳໄປຈັດ ຕັ້ງປະຕິບັດເພື່ອປັບປຸງການເຂົ້າເຖິງນ້ຳສະອາດ ແລະ ສົ່ງເສີມການນຳໃຊ້ນ້ຳແບບຍືນຍົງ.

Australian Aid

ALUMNI INNOVATION GRANTS

ທຶນຊ່ວຍເຫຼືອຂະໜາດນ້ອຍສໍາລັບອະດີດນັກສຶກສາລາວ-ອົດສະຕຣາລີ

ໂຄງການ:

# " ສົ່ງເສີມຄວາມສະເໝີພາບລະຫວ່າງ ຍິງ-ຊາຍ ແລະ ຊີວິດການເປັນຢູ່ "

ບ້ານ ນາເຫົາ, ເມືອງ ແປກ ແຂວງ ຊຽງຂວາງ, ປະເທດ ລາວ

AIG 5










## ທ່ານ ມະດໍາ ຖໍ່

**ຫົວໜ້າຝ່າຍສັງຄົມສົງເຄາະ**

ສະມາຄົມພັດທະນາຄົນພິການ ແຂວງຊຽງຂວາງ



ທ່ານ ມະດໍາ ຖໍ່ ຮຽນ ຈົບຫຼັກສູດພາສາອັງກິດ ທີ່ ວຽງຈັນ ຄໍເລສ (Vientiane College) ພາຍໃຕ້ ໂຄງການສົ່ງເສີມການພັດທະນາແບບມີສ່ວນຮ່ວມໃຫ້ຄົນພິການ ທີ່ ລັດຖະບານອົດສະຕາລີ ໃຫ້ການ ສະໜັບສະໜູນ. ປະຈຸບັນ, ທ່ານ ມະດໍາ ຖໍ່ ແມ່ນ ຫົວໜ້າຝ່າຍສັງຄົມສົງເຄາະ ຂອງ ສະມາຄົມພັດທະນາ ຄົນພິການ ແຂວງຊຽງຂວາງ.

ດ້ວຍຄວາມມັກຮັກ ໃນການຊ່ວຍເຫຼືອຫຼາຍຄອບຄົວທີ່ດ້ອຍໂອກາດຢູ່ເຂດຊົນນະບົດ, ທ່ານ ມະດໍາ ໄດ້ ນໍາໃຊ້ ທຶນຊວ່ຍເຫຼືອລ້າຜ່ານ ໂຄງການທຶນຊ່ວຍເຫຼືອຂະໜາດນ້ອຍ ສໍາລັບອະດີດນັກສຶກສາອົດສະ ຕຣາລີ #AlumniInnovationGrants ເພື່ອສົ່ງເສີມຄວາມສະເໝີພາບລະຫວ່າງ ຍິງ-ຊາຍ ແລະ ຊີວິດການເປັນຢູ່ຂອງຊາວບ້ານນາເຫົາ ແລະ ບ້ານນາດີ, ເມືອງແປກ, ແຂວງຊຽງຂວາງ

ຜ່ານໂຄງການນີ້, ມີ 40 ຄອບຄົວເຂົ້າຮ່ວມຝຶກອົບຮົມເປັນເວລາ 3 ວັນ ເພື່ອຮຽນຮູ້ກ່ຽວກັບ ບົດບາດ ຍິງ-ຊາຍ ຜ່ານແຜນງານທີ່ມີຊື່ວ່າ ລະບົບການປະຕິບັດໂຕຈິງດ້ານບົດບາດຍິງ-ຊາຍ (GALS tool), ເຊິ່ງແຜນງານນີ້ມີເປົ້າໝາຍເພື່ອສ້າງຄວາມສາມັກຄີໃນຄອບຄົວ, ຍົກສູງຄູນຄ່າ ຄວາມສະເໝີພາບ, ບົດບາດຍິງ-ຊາຍ ແລະ ຊ່ວຍໃຫ້ເຂົາເຈົ້າບັນລຸເປົ້າໝາຍຮ່ວມກັນ. ນອກນັ້ນ, ໂຄງການນີ້ຍັງໄດ້ມອບ ອຸປະກອນສໍາລັບການຕໍາຫູກເຊັ່ນ: ຝ້າຍ ແລະ ໄໝ ໃຫ້ແກ່ຄອບຄົວຜູ້ເຂົ້າຮ່ວມໂຄງການ ເພື່ອໃຫ້ເຂົາເຈົ້າ ສາມາດຜະລິດສິນຄ້າຫັດຖະກໍາ ແລະ ຂາຍຢູ່ຕະຫຼາດທ້ອງຖິ່ນ, ເພື່ອເພີ່ມລາຍຮັບໃຫ້ແຕ່ລະຄອບຄົວ.

ຊົມເຊີຍ ທ່ານ ມະດໍາ! ຂໍໃຫ້ທ່ານ ພາກພູມໃຈໃນຜົນສໍາເລັດ ແລະ ການນໍາພາໃຫ້ຊຸມຊົນທີ່ແຂວງ ຊຽງຂວາງມີຄວາມກ້າວໜ້າໄປເລື້ອຍໆ.

Australian Aid

# ALUMNI INNOVATION GRANTS

ທຶນຊ່ວຍເຫຼືອຂະໜາດນ້ອຍສຳລັບອະດີດນັກສຶກສາລາວ-ອົດສະຕຣາລີ

ໂຄງການ:

## " ພະລັງງານແສງຕາເວັນອະນາຄົດທີ່ສົດໃສ ສຳລັບຊົນນະບົດຂອງລາວ "

ບ້ານ ປົງ, ເມືອງ ຄົງເຊໂດນ, ແຂວງ ສາລາວັນ, ປະເທດ ລາວ

AIG 5










### ທ່ານ ນາງ ແສງທິດາ ສີວິໄລ

**ພະນັກງານເຕັກນິກ**

ພະແນກສາທາລະນະສຸກ, ກະຊວງສາທາລະນະສຸກ



ທ່ານ ນາງ ແສງທິດາ ສີວິໄລ ເປັນອະດີດນັກສຶກສາ ທຶນການສຶກສາ ອົດສະຕຣາລີ ທີ່ມີວິໄສທັດເພື່ອຊ່ວຍເຫຼືອໃຫ້ປະຊາຊົນ ແຂວງສາລະວັນ ມີອະນາຄົດທີ່ດີຂຶ້ນ.

ກ່ອນໜ້ານີ້, ທ່ານ ນາງ ແສງທິດາ ໄດ້ໄປຢ້ຽມຢາມສຸກສາລາ ບ້ານປົງ ແລະ ໄດ້ສັງເກດເຫັນວ່າ ສຸກສາລາ ຍັງຂາດສິ່ງອຳນວຍຄວາມສະດວກພື້ນຖານຫຼາຍດ້ານ, ໂດຍສະເພາະແມ່ນບໍ່ມີໄຟຟ້າທີ່ພຽງພໍໃນຕອນກາງຄືນ ເພື່ອໃຫ້ບໍລິການຄົນເຈັບ ຕະຫຼອດ 24 ຊົ່ວໂມງ. ຜ່ານການໂອ້ລົມກັບທ່ານໝໍ ແລະ ພະນັກງານຂອງສຸກສາລາ, ທ່ານ ນາງ ແສງທິດາ ໄດ້ຮູ້ວ່າຄົນເຈັບບໍ່ສາມາດເຂົ້າເຖິງການບໍລິການທີ່ດີໃນເວລາກາງຄືນ, ໂດຍສະເພາະໃນເວລາມີເຫດສຸກເສີນ.

ດ້ວຍທຶນຈາກໂຄງການທຶນຊ່ວຍເຫຼືອລ້າຂະໜາດນ້ອຍສຳລັບ ອະດີດນັກສຶກສາອົດສະຕຣາລີ #AustraliaAlumniInnovationGrants, ທ່ານ ນາງ ແສງທິດາ ໄດ້ນຳໃຊ້ທັກສະການເປັນຜູ້ນຳ ແລະ ທັກສະທາງເຕັກນິກຂອງສະມາຊິກທີມອະດີດນັກສຶກສານຳກັນ ເພື່ອປັບປຸງສິ່ງອຳນວຍຄວາມສະດວກ ໃຫ້ກັບສຸກສາລາ ບ້ານປົງ. ໂຄງການນີ້ໄດ້ຕິດຕັ້ງນະວັດຕະກຳແສງສະຫວ່າງ ແບບຍືນຍົງໃຫ້ກັບສຸກສາລາ ເຊິ່ງລວມທັງບ່ອນເກັບຢາ ແລະ ຫໍພັກພະນັກງານ. ນອກຈາກນັ້ນ, ໂຄງການຍັງໄດ້ຕິດຕັ້ງດອກໄຟພະລັງງານແສງຕາເວັນໃຫ້ກັບສຸກສາລາ ເພື່ອໃຫ້ມີຄວາມປອດໄພເພີ່ມຂຶ້ນ ແລະ ສົ່ງຜົນໃຫ້ປະຊາຊົນມີສະດວກສະບາຍໃນການເຂົ້າໄປໃຊ້ບໍລິການຢູ່ສຸກສາລາໃນເວລາກາງຄືນ, ເຊິ່ງເຫັນວ່າຫຼັງຈາກຕິດຕັ້ງແລ້ວ ມີປະຊາຊົນເຂົ້າມາໃຊ້ບໍລິການໃນເວລາກາງຄືນເພີ່ມຂຶ້ນ 50%. ນອກຈາກນັ້ນ, ລະບົບພະລັງງານໄຟຟ້າຈາກແສງຕາເວັນ ໄດ້ຊ່ວຍໃຫ້ສຸກສາລາສາມາດປະຢັດຄ່າໄຟຟ້າໄດ້ເຖິງ 50% ອີກດ້ວຍ.

ໂຄງການນີ້ ເຮັດໃຫ້ປະຊາຊົນຢູ່ 3 ບ້ານ ຈຳນວນ 3,629 ຄົນ ສາມາດເຂົ້າເຖິງການບໍລິການດ້ານສຸຂະພາບທີ່ດີຂຶ້ນ. ເປັນຜົນໄດ້ຮັບທີ່ດີຫຼາຍ!

ຂໍສະແດງຄວາມຍິນດີກັບ ທ່ານນາງ ແສງທິດາ, ລວມທັງຄວາມເປັນຜູ້ນຳ ແລະ ນະວັດຕະກຳຂອງທ່ານ ທີ່ໄດ້ສ້າງຄວາມແຕກຕ່າງດ້ານບວກຢ່າງແທ້ຈິງໃຫ້ແກ່ຊຸມຊົນ!